ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 71/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 07 ກັນຍາ 2020

# <u>ແຈ້ງການ</u>

**ຮຽນ: - ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;**

- **ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ;**
- **ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ;**
- **ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ;**
- **ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ເອພີເອັມ ລາວ ຈຳກັດ;**
- **ບັນດາ ທ່ານຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.**

**ເລື່ອງ: ການປັບຫຼຸດຄ່າທຳນຽມ ການຊື້ ຂາຍ ແລະ ການໂອນ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.**

- ອີງຕາມ ລັດຖະບັນຍັດເລກທີ 001/ປປທ, ລົງວັນທີ 28 ທັນວາ 2010;
- ອີງຕາມ ມະຕິຄະນະປະຈຳສະພາແຫ່ງຊາດ ເລກທີ 21/ຄປຈ ລົງວັນທີ 27 ມີນາ 2020 ແລະ ອີງຕາມ ຈົດໝາຍເຫດທາງລັດຖະການ ລົງວັນທີ 21 ສິງຫາ 2020;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ຂໍ້ຕົກລົງວ່າ ດ້ວຍການກຳນົດອັດຕາຄ່າທຳນຽມຊື້ ຂາຍ ແລະ ໂອນ ຮຸ້ນຈົດທະບຽນ ໃນຕະຫຼາດ ຫຼັກຊັບລາວ ສະບັບເລກທີ 063/ຄຄຊ, ລົງວັນທີ 07 ກັນຍາ 2020.

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ລັດຖະບານ ໄດ້ຍົກເລີກການເກັບຄ່າທຳນຽມ ການຂາຍ ແລະ ການໂອນ ຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນອັດຕາ 0,3% ທີ່ເປັນ**ສ່ວນຂອງລັດຖະບານ** ແລ້ວ ໂດຍເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ **07 ກັນຍາ 2020** ເປັນຕົ້ນໄປ.

ສະນັ້ນ, ເພື່ອໃຫ້ສອດຄ່ອງກັບການຍົກເລີກດັ່ງກ່າວ ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງວ່າດ້ວຍການກຳນົດອັດຕາຄ່າທຳນຽມ ການຊື້ ຂາຍ ແລະ ການໂອນ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 063 /ຄຄຊ, ລົງວັນທີ 07 ກັນຍາ 2020 ສະບັບປັບປຸງ **(ຕາມເອກະສານຄັດຕິດ)** ເພື່ອປ່ຽນແທນສະບັບເລກທີ 10/ຄຄຊ, ລົງວັນທີ 27 ເມສາ 2017.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ສາຍສະໝອນ ຈັນທະຈັກ